# ປັດໄຈເສດຖະກິດທີ່ສົ່ງຜົນຕໍ່ອັດຕາແລກປ່ຽນໃນ ສປປ ລາວ

**ຜູ້ຂຽນ: ວິລັດດາ ພິມພະຈັນ[1], ຕຸລາຄຳ ອິນທຸລາດ, ນິພາພອນ ມີໄຊພົນ**

*ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

*[1] **ຜູ້ຮັບຜິດຊອບ:** ວິລັດດາ ພິມພະຈັນ, ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

ການສຶກສາປັດໄຈເສດຖະກິດທີ່ສົ່ງຜົນຕໍ່ອັດຕາແລກປ່ຽນໃນ ສປປ ລາວ ແມ່ນເຫັນວ່າມີຄວາມສຳຄັນຫຼາຍຕໍ່ລະບົບເສດຖະກິດບໍ່ວ່າຈະເປັນດ້ານການຄ້າລະຫວ່າງປະເທດ, ການນຳເຂົ້າ ແລະ ການສົ່ງອອກ, ການລົງທຶນຕ່າງໆ. ສຳລັບຈຸດປະສົງຂອງການສຶກສາໃນຄັ້ງນີ້ ແມ່ນເພື່ອສຶກສາປັດໄຈທາງດ້ານເສດຖະກິດ ເປັນຕົ້ນແມ່ນ ປະລິມານເງິນໃນຄວາມໝາຍກວ້າງ, ອັດຕາເງິນເຟີ້, ອັດຕາດອກເບ້ຍກູ້ຢືມລະຫວ່າງທະນາຄານ, ຄັງສຳຮອງເງິນຕາຕ່າງປະເທດ ແລະ ດຸນບັນຊີຊຳລະປົກກະຕິ ທີ່ສົ່ງຜົນຕໍ່ອັດຕາແລກປ່ຽນໃນ ສປປ ລາວ ໂດຍສະເພາະ ອັດຕາແລກປ່ຽນເງິນກີບຕໍ່ເງິນໂດລາສະຫະລັດ ແລະ ເງິນກີບຕໍ່ເງິນບາດ. ໂດຍຂໍ້ມູນທີ່ໃຊ້ໃນການສຶກສາ ແມ່ນຈະອີງໃສ່ຂໍ້ມູນທຸຕິຍະພູມ (Secondary Data) ທີ່ເປັນຂໍ້ມູນອະນຸກົມເວລາ (Time-Series data) ສຶກສານັບແຕ່ ໄຕມາດ 1 ປີ 2010 ຈົນເຖິງ ໄຕມາດ 4 ປີ 2023 ຂໍ້ມູນແບບລາຍໄຕມາດ ລວມທັງໝົດ 56 ໄຕມາດ, ການວິເຄາະແບບປະລິມານ ໂດຍໃຊ້ວິທີແບບຈຳລອງ Autoregressive Distributed Lag (ARDL).

ຜົນການສຶກສາພົບວ່າ ປະລິມານເງິນໃນຄວາມໝາຍກວ້າງ, ຄັງສຳຮອງເງິນຕາຕ່າງປະເທດ ແລະ ອັດຕາເງິນເຟີ້ ມີຄວາມສຳພັນໃນທິດທາງດຽວກັນກັບອັດຕາແລກປ່ຽນເງິນກີບຕໍ່ເງິນໂດລາສະຫະລັດ ແລະ ເງິນກີບຕໍ່ເງິນບາດ ຢ່າງມີຄວາມສຳຄັນທາງສະຖິຕິ. ສ່ວນອັດຕາດອກເບ້ຍກູ້ຢືມລະຫວ່າງທະນາຄານ ມີຄວາມສຳພັນໃນທິດທາງກົງກັນຂ້າມກັບອັດຕາແລກປ່ຽນເງິນກີບຕໍ່ເງິນບາດ ຢ່າງມີຄວາມສຳຄັນທາງສະຖິຕິ. ສຳລັບດຸນບັນຊີຊຳລະປົກກະຕິ ແມ່ນບໍ່ມີຄວາມສຳພັນຕໍ່ອັດຕາແລກປ່ຽນເງິນກີບຕໍ່ເງິນໂດລາສະຫະລັດ ແລະ ເງິນກີບຕໍ່ເງິນບາດ.

**ຄຳສຳຄັນ:** ອັດຕາແລກປ່ຽນເງິນກີບທຽບເງິນໂດລາສະຫະລັດ, ອັດຕາແລກປ່ຽນເງິນກີບທຽບເງິນບາດ, ປັດໄຈເສດຖະກິດ.

# THE ECONOMIC FACTORS AFFECTING ON EXCHANGE RATE IN THE LAO PDR

The study of economic factors affecting on exchange rate in the Lao PDR is crucial for the economic system, particularly in areas such as international trade, import and export, and investment. This research aims to analyze key economic factors including money supply, inflation rate, interbank rate, foreign reserves, and current account that affecting on exchange rate in the Lao PDR especially exchange rate of Lao Kip against the US Dollar and Thai Baht. The study covers data from the 1st quarter of 2010 to the 4th quarter of 2023, encompassing 56 quarterly observations. The analysis is conducted using quantitative analysis through the Autoregressive Distributed Lag (ARDL) Model.

The study found that the money supply, foreign reserves and inflation rate have a significant and positive impact on the exchange rate of Lao Kip against both the US Dollar and the Thai Baht. while the interbank rate has a significant and negative impact on the exchange rate of Lao Kip against the Thai Baht. However, the current account does not have a significant impact on the exchange rate of  Lao Kip against either the US Dollar or the Thai Baht.

**Keywords:** Exchange rate of LAK against the USD, Exchange rate of LAK against the THB, Economic factors.